ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນ89
ໂທ03122
ທົ່ວ...

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ເລກທີ 0485 / ຫອຄ
ນະຄອນຫຼວງວຽງຈັນ, ວັນທີ 15 ມີນາ 2022

# ແຈ້ງການ

ເຖິງ : ເຈົ້າໜ້າທີ່ທະບຽນວິສາຫະກິດ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ.

ເລື່ອງ: ປົດເອກະສານກ່ຽວກັບ ໃບຢັ້ງຢືນການລົງທະບຽນປະກັນສັງຄົມຂອງຫົວໜ້າ, ພະນັກງານສາຂາ, ຫົວໜ້າ ແລະ ພະນັກງານຮ້ານຈຳໜ່າຍແຕ່ລະຄົນ ອອກຈາກລາຍການເອກະສານປະກອບໃນການສ້າງຕັ້ງສາຂາ ແລະ ສ້າງຕັ້ງຮ້ານຈຳໜ່າຍຜະລິດຕະພັນ, ສິນຄ້າຂອງວິສາຫະກິດ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການກະຊວງອຸດສາຫະກຳແລະ ການຄ້າ ສະບັບເລກທີ 0634/ອຄ.ກຈຜງ, ລົງວັນທີ 1 ກໍລະກົດ 2020;
- ອີງຕາມ ແຈ້ງການວ່າດ້ວຍການສ້າງຕັ້ງສາຂາ ຫລື ຮ້ານຈຳໜ່າຍຜະລິດຕະພັນ, ສິນຄ້າຂອງວິສາຫະກິດ ສະບັບເລກທີ 0050/ ຫອຄ.ກທຄວ, ລົງວັນທີ 15 ມັງກອນ 2020;
- ອີງຕາມ ການສະເໜີ ຂອງຜູ້ຕາງຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນກອງປະຊຸມພາກທຸລະກິດ ຄັ້ງວັນທີ 24 ທັນວາ 2021.

ເພື່ອເຮັດໃຫ້ເອກະສານປະກອບໃນການສ້າງຕັ້ງສາຂາ ແລະ ສ້າງຕັ້ງຮ້ານຈຳໜ່າຍຜະລິດຕະພັນ, ສິນຄ້າຂອງວິສາຫະກິດ ມີຄວາມກະທັດຮັດ, ຫຼຸດເອກະສານບໍ່ຈຳເປັນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງເຈົ້າໜ້າທີ່ທະບຽນວິສາຫະກິດແຂວງ, ນະຄອນຫຼວງຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ປົດເອກະສານກ່ຽວກັບໃບຢັ້ງຢືນການລົງທະບຽນປະກັນສັງຄົມຂອງຫົວໜ້າ, ພະນັກງານສາຂາ, ຫົວໜ້າ ແລະ ພະນັກງານຮ້ານຈຳໜ່າຍແຕ່ລະຄົນ ຕາມທີ່ໄດ້ກຳນົດຢູ່ໃນຂົດໜ້າ 5, ຂໍ້ 4 ຂອງ ຂໍ້ ກ ແລະ ຂົດໜ້າ 5, ຂໍ້ 2 ຂອງ ຂໍ້ ຂ ອອກຈາກລາຍການເອກະສານປະກອບໃນການສ້າງຕັ້ງສາຂາ ແລະ ຮ້ານຈຳໜ່າຍຂອງວິສາຫະກິດ ຂອງແຈ້ງການວ່າດ້ວຍການສ້າງຕັ້ງສາຂາ ຫລື ຮ້ານຈຳໜ່າຍຜະລິດຕະພັນ, ສິນຄ້າຂອງວິສາຫະກິດ ສະບັບເລກທີ 0050/ ຫອຄ.ກທຄວ, ລົງວັນທີ 15 ມັງກອນ 2020.
2. ຫ້າມເຈົ້າໜ້າທີ່ທະບຽນວິສາຫະກິດ ຮຽກເອົາເອກະສານ ຕາມທີ່ໄດ້ກຳນົດໃນຂໍ້ 1 ເທິງນີ້ ຢ່າງເດັດຂາດ.
3. ສຳລັບ ເອກະສານປະກອບ ແລະ ເນື້ອໃນອື່ນ ແມ່ນໃຫ້ສືບຕໍ່ຈັດຕັ້ງປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນແຈ້ງການວ່າດ້ວຍການສ້າງຕັ້ງສາຂາ ຫລື ຮ້ານຈຳໜ່າຍຜະລິດຕະພັນ, ສິນຄ້າຂອງວິສາຫະກິດ ສະບັບເລກທີ 0050 / ຫອຄ.ກທຄວ, ລົງວັນທີ 15 ມັງກອນ 2020.

ດັ່ງນັ້ນ, ຈຶ່ງແຈ້ງມາ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຮັກສາການແທນຫົວໜ້າຫ້ອງການ

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ນ.ສີມາລາ ແກ້ວສະກຸນວົງ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ,ກະຊວງອຸດສາຫະກຳ ແລະການຄ້າ
ໂທລະສັບ: 021 412001

สแกนด้วย CamScanner